# ການອະນຸລັກປ່າເຫັດທຳມະຊາດ

## ໃນແຂວງຊຽງຂວາງ

*ເຫັດທຳມະຊາດແມ່ນ ຜະລິດຕະພັນເຄື່ອງປ່າຂອງດົງຈາກທຳມະຊາດ ມີສັບພະຄຸນບຳລຸງສຸຂະພາບ, ເປັນຢາອາຍຸວັດທະນະ ແລະ ເປັນອາຫານມີໂພຊະການຈາກທຳມະຊາດທີ່ ປະຊາຊົນໃນທ້ອງຖິ່ນຫາກິນໄດ້ງ່າຍຕາມລະດູການ, ພ້ອມທັງສ້າງລາຍຮັບໃຫ້ແກ່ປະຊາຊົນຢ່າງຫຼວງຫຼາຍ ໃນແຕ່ລະປີໃນຊ່ວງເຫັດອອກ, ໂດຍສະເພາະແມ່ນເຫັດຫວາຍ ແລະ ເຫັດກໍ່ແດງທີ່ເປັນສິນຄ້າລາຄາສູງ ທີ່ມີການສົ່ງອອກຕ່າງປະເທດໃນແຕ່ລະປີເປັນຈຳນວນຫຼາຍໂຕນ.*



## ນິເວດວິທະຍາ ແລະ ການຄຸ້ມຄອງ

- ເຫັດທີ່ພົບອອກຫຼາຍໃນແຕ່ລະປີແມ່ນປ່າໄມ້ກໍ່, ປ່າແປກ ແລະ ປ່າປະສົມ.
- ຊ່ວງເຫັດທຳມະຊາດອອກໃນແຕ່ລະປີເລີ່ມທ້າຍເດືອນເມສາເຖິງທ້າຍເດືອນສິງຫາ
- ລະດັບຄວາມສູງຈາກໜ້ານ້ຳທະເລແຕ່ 800-1500 ແມັດ.



## ຜົນການຜະລິດ:

- ປ່າເຫັດທີ່ໄດ້ກຳນົດເປັນເຂດອະນຸລັກເພື່ອເກັບກູ້ເຫັດຕາມລະດູການແມ່ນນອນຢູ່ໃນ 15 ບ້ານ ຂອງເມືອງພູກູດ, ໃນເນື້ອທີ່ 14,220.45 ເຮັກຕາ.
- ປ່າເຫັດທຳມະຊາດເປັນແຫລ່ງສະໜອງອາຫານໃຫ້ແກ່ປະຊາຊົນຫລາຍກ່ວາ 7,785 ຄົນ, ຈຳນວນ 1,873 ຄອບຄົວໃນເຂດເມືອງພູກູດ.
- ໃນແຕ່ລະປີປ່າເຫັດໄດ້ສະໜອງເຫັດຫວາຍ 2.4 ໂຕນ, ເຫັດກໍ່ແດງ 21.5 ໂຕນ, ແລະ ເຫັດອື່ນໆ 8.7 ໂຕນ.

## ການຕະຫຼາດ:

- ໃນແຕ່ລະປີສາມາດຂາຍເຫັດສະເລ່ຍໄດ້ 1,933,760,000 ກີບ.
- ການຕະຫລາດເຫັດຫວາຍຂາຍພາຍໃນເພື່ອບໍລິໂພກ, ສົ່ງອອກ ພ້ອມເຫັດກໍ່ແດງສ່ວນຫຼາຍແມ່ນສົ່ງອອກໄປປະເທດຈີນ.
- ຍ້ອນວ່າເຫັດຫວາຍ ແລະ ເຫັດກໍ່ແດງມີລາຄາສູງ, ຈຶ່ງໄດ້ມີການປຸງແຕ່ງໂດຍການອົບແຫ້ງ ແລະ ຫຸ້ມຫໍ່ໂດຍພໍ່ຄ້າທ້ອງຖິ່ນ ຈາກນັ້ນສົ່ງຂາຍຕໍ່ໃຫ້ພໍ່ຄ້າຈີນ
- ພະແນກ/ຫ້ອງການກະສິກຳ ແລະ ປ່າໄມ້ໄດ້ໃຫ້ການສະໜັບສະໜູນເຕັກນິກການເກັບກູ້ ແລະ ການຕະຫຼາດ.



## ໂອກາດ:

- ສາມາດຂະຫຍາຍເນື້ອທີ່ປ່າເຫັດທຳມະຊາດໃຫ້ມີເນື້ອທີ່ກວ້າງອອກເມືອງອື່ນໆຂອງແຂວງຊຽງຂວາງ.
- ສ້າງສິ່ງອຳນວຍຄວາມສະດວກ ດ້ານການທ່ອງທ່ຽວໃນລະດູເຫັດອອກໃຫ້ແກ່ ປະຊາຊົນທ້ອງຖິ່ນ ເພື່ອເພີ່ມລາຍຮັບຈາກການຂາຍເຫັດ, ກິນເຫັດ ແລະ ຫັດຖະກຳອື່ນໆໃນທ້ອງຖິ່ນ.
- ປ່າເຫັດທຳມະຊາດ ທ່າແຮງໃນການກະຕຸ້ນ ແລະ ເພື່ອຫລຸດຜ່ອນການນຳໃຊ້ຢາປາບສັດຕູພືດ ແລະ ຢາຂ້າຫຍ້າ ໃນເຂດດິນກະສິກຳ.
- ຍົກລະດັບຄວາມຮູ້ ແລະ ຄວາມສາມາດກ່ຽວກັບການອະນຸລັກປ່າເຫັດທຳມະຊາດ ໂດຍວິທີການແຈກຢາຍແຜ່ນພັບ, ໂປດສະເຕີ ແລະ ຕິດປ້າຍໃຫ້ຢູ່ໃກ້ກັບເຂດບໍລິເວນພື້ນທີ່ເຫັດທຳມະຊາດອອກ.
- ນຳເອົາກິດຈະກຳການອະນຸລັກປ່າເຫັດທຳມະຊາດ ປະກອບເຂົ້າໃນໂຄງການໂພຊະນາການ.



Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

NAFRI